**ມິຊຊາອາທິດທີ 4 ກຳນົດບຳເພັນສິນບົ B**

**ວັນທີ 14 ມີນາ 2021**



**ພຣະວໍລະສານໂດຍນັກບຸນຢວງ 3, 14-21**

ໃນເວລານັ້ນພຣະເຢຊູເຈົ້າກ່າວກັບນີໂກແດມວ່າ: “ໂມແຊໄດ້ຍົກຮູບງູຂຶ້ນຕັ້ງໄວ້ ໃນທີ່ປ່ຽວ ຢ່າງໃດ ບຸດມະນຸດ ກໍຈະຖືກຍົກຂຶ້ນ ຕັ້ງໄວ້ດັ່ງນັ້ນ ເພື່ອໃຫ້ບັນດາ ທີ່ເຊື່ອເຖິງພຣະອົງ ໄດ້ບັນລຸ ເຖິງຊີວິດນິຣັນດອນ.

ພຣະເຈົ້າຊົງຮັກມະນຸດຢ່າງເຫລືອລົ້ນຈົນໄດ້ປະທານພຣະເອກະບຸດມາຊ່ວຍທຸກຄົນທີ່ເຊື່ອ ໃນພຣະອົງ,ບໍ່ໃຫ້ພິນາດຈິບຫາຍ, ແຕ່ໃຫ້ໄດ້ຊີວິດນິຣັນດອນ. ຍ້ອນວ່າພຣະເຈົ້າບໍ່ໄດ້ຊົງໃຊ້ພຣະ ບຸດມາພິພາກສາໂລກ, ແຕ່ມາຊ່ວຍໂລກໃຫ້ຮອດ, ດ້ວຍອາໄສພຣະບຸດນັ້ນ. ຜູ້ໃດເຊື່ອເຖິງພຣະ ບຸດຈະບໍ່ຖືກພິພາກສາ. ສ່ວນຜູ້ທີ່ບໍ່ເຊື່ອນັ້ນໄດ້ຖືກພິພາກສາໂທດແລ້ວ. ຍ້ອນວ່າເຂົາບໍ່ເຊື່ອເຖິງ ພຣະນາມຂອງພຣະເອກະບຸດຂອງພຣະເຈົ້າ. ການພິພາກສາໂທດນັ້ນແມ່ນດັ່ງນີ້ຄືຄວາມສະວ່າງ ໄດ້ມາໃນໂລກ ແຕ່ມະນຸດມັກຄວາມມືດ ຫລາຍກວ່າຄວາມສະວ່າງ. ຍ້ອນວ່າວຽກການຂອງເຂົາ ຊົ່ວຊາມ. ຜູ້ໃດທຳຄວາມຊົ່ວກໍຽດຊັງຄວາມສະວ່າງ ແລະບໍ່ຍອມມາຫາຄວາມສະວ່າງ. ຍ້ອນ ຢ້ານວຽກການຊົ່ວຊາມຂອງເຂົາຖືກເຜີຍອອກມາ. ສ່ວນຜູ້ທຳຕາມຄວາມຈິງກໍມາຫາຄວາມສະວ່າງ ເພື່ອໃຫ້ໂລກເຫັນແຈ້ງວ່າເຂົາໄດ້ກະທຳວຽກການຂອງຕົນໃນພຣະເຈົ້າ.”

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ:**

ພວກເຮົາໄດ້ຫຍັບເຂົ້າໃກ້ອີກອາທິດໜຶ່ງກ່ອນທີ່ຈະເຖິງວັນສະຫລອງປາສກາ, ວັນທີ່ພຣະເຢຊູເຈົ້າຈະກັບເປັນຄືນມາຈາກຄວາມຕາຍ. ບົດອ່ານໃນວັນອາທິດນີ້ຈະຊ່ວຍພວກເຮົາໃຫ້ເບິ່ງຄືນຊີວິດ, ບາບຜິດບົກຜ່ອງຕ່າງໆຂອງພວກເຮົາແລະຫັນມາຫາພຣະເມດຕາກະລຸນາຂອງພຣະເຈົ້າເພື່ອຮັບການໃຫ້ອະໄພຈາກພຣະອົງ.

ບົດອ່ານທີໜຶ່ງຂອງວັນອາທິດນີ້ຈາກໜັງສືພົງສາວະດານເຫລັ້ມທີ 2 ໄດ້ຍົກໃຫ້ພວກເຮົາເຫັນເຖິງບາບຜິດຂອງບັນດາມະຫາສົງແລະປະຊາກອນຂອງພຣະເຈົ້າ. ພວກເຂົາໄດ້ລືມພຣະເຈົ້າແລະພຣະສຳພັນໄມຕຣີຂອງພຣະອົງ. ສິ່ງນີ້ສະແດງອອກຢູ່ບ່ອນວ່າພວກເຂົາໄດ້ທຸລະຈານແລະທຳລາຍພຣະວິຫານອັນແມ່ນສະຖານທີ່ສັກສິດບ່ອນປະທັບຢູ່ຂອງພຣະເຈົ້າຢູ່ນະຄອນເຢລູຊາແລມ. ເຖິງປານນັ້ນກໍດີ, ພຣະເຈົ້າກໍຍັງສົ່ງປະພາສົກຂອງພຣະອົງມາເພື່ອຕັກເຕືອນແລະບອກສອນພວກເຂົາໃຫ້ກັບຈິດປ່ຽນໃຈແລະຫັນມາຫາພຣະເມດຕາກະລຸນາຂອງພຣະເຈົ້າ. ແຕ່ພວກເຂົາກໍບໍ່ຟັງ, ຊໍ້າຍັງທຳຮ້າຍປະພາສົກຂອງພຣະອົງອີກ.

ສ່ວນໃນບົດອ່ານທີສອງຈາກຈົດໝາຍຂອງນັກບຸນເປົາໂລຂຽນຫາຊາວເອເຟໂຊທ່ານກໍໄດ້ອະທິບາຍໃຫ້ຊາວເມືອງເອເຟໂຊເຂົ້າໃຈເຖິງພຣະເມດຕາກະລຸນາຂອງພຣະເຈົ້າທີ່ມີຕໍ່ພວກເຂົາ. ເຖິງວ່າພວກເຂົາຈະຕົກຢູ່ໃນບາບແຕ່ພຣະເຈົ້າກໍຍັງມີຄວາມເມດຕາສົງສານຈຶ່ງສົ່ງພຣະບຸດອົງດຽວຂອງພຣະອົງລົງມາເພື່ອໄຖ່ເອົາບາບໂທດຂອງພວກເຂົາແລະໃຫ້ພວກເຂົາໄດ້ຮອດຊີວິດ.

ໃນພຣະວໍລະສານຂອງວັນນີ້, ນັກບຸນຢວງກໍອະທິບາຍໃຫ້ພວກເຮົາເຂົ້າໃຈເຖິງພາລະກິດແຫ່ງການໄຖ່ກູ້ຂອງພຣະເຢຊູເຈົ້າຜ່ານທາງການທໍລະມານແລະຕາຍບົນໄມ້ກາງເຂນຍ້ອນຮັກມະນຸດ. ແລະຍ້ອນຢາກໃຫ້ມະນຸດໄດ້ກັບມາຄືນດີກັບພຣະບິດາເຈົ້າສະຫວັນ. ເຖິງປານນັ້ນກໍດີ, ມະນຸດກໍຍັງມັກຊອບຄວາມມືດຫລາຍກວ່າຄວາມສະວ່າງ. ມະນຸດຍັງບໍ່ຢາກກັບມາຫາພຣະເຈົ້າຜູ້ເປັນອົງແຫ່ງຄວາມສະວ່າງ. ສ່ວນຜູ້ທີ່ກັບມາຫາພຣະອົງ, ຜູ້ນັ້ນກໍຢູ່ໃນຄວາມຈິງແລະເປັນລູກຂອງຄວາມສະວ່າງ. ຫລືເວົ້າອີກຢ່າງ, ຜູ້ທີ່ກັບມາຫາພຣະເຈົ້າ ຜູ້ນັ້ນກໍໄດ້ຮອດຊີວິດແລະຢູ່ນຳພຣະອົງ.

**ພາວະນາ**

ໂອພຣະເຢຊູເຈົ້າ ໂຜດຊ່ວຍລູກໃຫ້ສຳພັດໄດ້ເຖິງພຣະເມດຕາກະລຸນາຂອງພຣະອົງທີ່ມີຕໍ່ລູກຄົນບາບ. ເພື່ອລູກຈະໄດ້ເປີດໃຈຮັບເອົາຄວາມເມດຕາແລະການໃຫ້ອະໄພຈາກພຣະອົງໃນກຳນົດບຳເພັນສິນນີ້ດ້ວຍເທີ້ນ. ອາແມນ

ຄຸນພໍ່ ອົງຕວນ ກຽດຕິສັກ